**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ — ນະຄອນຫຼວງວຽງຈັນ, ວັນທີ 18/6/2020

# ຜ-ຟຟລ ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນປະຈໍາປີ 2019 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ"

ໃນວັນທີ 12 ມິຖຸນາ 2020, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນປະຈໍາປີ 2019 ຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ ຫຼື ຕລຊລ (LSX Disclosure Award 2019)". ຈຸດປະສົງໃນການຈັດພິທີດັ່ງກ່າວ ແມ່ນເພື່ອເປັນການສະຫຼຸບຕີລາຄາຜົນງານການເປີດເຜີຍຂໍ້ມູນ ຂອງບໍລິສັດຈົດທະບຽນ ໃນ ຕລຊລ ຕະຫຼອດໄລຍະປີ 2019 ທີ່ຜ່ານມາ , ພ້ອມທັງເປັນການສົ່ງເສີມວຽກງານຕະຫຼາດທຶນ ກໍຄືພັນທະຂອງບໍລິສັດຈົດທະບຽນ ທີ່ຕ້ອງໄດ້ປະຕິບັດການເປີດເຜີຍຂໍ້ມູນໃຫ້ບັນດາຜູ້ລົງທຶນ ແລະ ມວນຊົນຮັບຊາບເປັນປະຈໍາ, ທັງຍັງເປັນການກະຕຸກຊຸກຍູ້ໃຫ້ບັນດາບໍລິສັດຈົດທະບຽນປະຕິບັດການລາຍງານ ແລະ ເປີດເຜີຍຂໍ້ມູນໃຫ້ສືບຕໍ່ເປັນປົກກະຕິຕໍ່ເນື່ອງ ແລະ ດີຍິ່ງຂຶ້ນ. ໃນພິທີດັ່ງກ່າວ ຜ-ຟຟລ ກໍໄດ້ຮັບ 2 ລາງວັນຄື "ໃບຍ້ອງຍໍການເປີດເຜີຍຂໍ້ມູນດີເດັ່ນປະເພດ 1" ແລະ "ໃບຍ້ອງຍໍການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ", ຮັບໂດຍ ທ່ານ ນາງ ລັດຕະນາ ປະທຸມວັນ, ຜູ້ອໍານວຍການໃຫຍ່ ຜ-ຟຟລ.








ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la